# ຂໍ້ກຳນົດ

## ເງື່ອນໄຂດ້ານສຸຂານາໄມ ກ່ຽວກັບ ການກັກກັນ ແລະ ກວດສຸຂະພາບສັດໃຫຍ່ ທີ່ຈະສົ່ງອອກ ຈາກ ສປປ ລາວ ໄປ ສປ ຈີນ

## ລະຫວ່າງ

## ກະຊວງກະສິກຳ ແລະປ່າໄມ້ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກົມໃຫຍ່ພາສີ ແຫ່ງ ສາທາລະນະລັດ ປະຊາຊົນຈີນ

ກະຊວງກະສິກຳ ແລະ ປ່າໄມ້ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ຕໍ່ໄປນີ້ເອີ້ນວ່າ: ກະຊວງກະສິກຳ ແລະ ປ່າໄມ້) ກັບ ກົມໃຫຍ່ພາສີ ແຫ່ງ ສາທາລະນະລັດ ປະຊາຊົນຈີນ (ຕໍ່ໄປນີ້ເອີ້ນວ່າ: ກົມໃຫຍ່ພາສີ) ທັງສອງຝ່າຍໄດ້ຕົກລົງກັນ ກ່ຽວກັບ ຂໍ້ກຳນົດດ້ານສຸຂານາໄມ ກ່ຽວກັບ ການກັກກັນ ແລະ ກວດສຸຂະພາບສັດ ປະເພດ ງົວ ຄວາຍ ທີ່ຈະສົ່ງອອກຈາກ ສປປ ລາວ ໄປ ສປ ຈີນ ດັ່ງນີ້:

**ນິຍາມ:** ສັດໃຫຍ່ ທີ່ກຳນົດຢູ່ໃນຂໍ້ກຳນົດສະບັບນີ້ ໝາຍເຖິງ ງົວ ແລະ ຄວາຍ ພັນຊີ້ນ ທີ່ມີອາຍຸບໍ່ເກີນ 4 ປີ ແລະ ຈະຖືກຂ້າພາຍໃນ 7 ວັນ ຫລັງຈາກນຳເຂົ້າ ສູ່ ສປ ຈີນ ເພື່ອການບໍລິໂພກ.

### ມາດຕາ 1

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບ ໃນການກັກກັນ ແລະ ກວດສຸຂະພາບສັດໃຫຍ່ ທີ່ຈະສົ່ງອອກ ໄປ ສປ ຈີນ ແລະ ອອກໃບຢັ້ງຢືນສຸຂະພາບສັດ. ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງເອົາແບບຂອງໃບຢັ້ງຢືນສຸຂະພາບສັດ ໃຫ້ ກົມໃຫຍ່ພາສີ ກ່ອນລ່ວງໜ້າ ເພື່ອກວດກາ ແລະ ຮັບຮອງຈຶ່ງຈະມີຜົນສັກສິດ. ໃບຢັ້ງຢືນສຸຂະພາບສັດ ຕ້ອງຄົບຖ້ວນຕາມຂໍ້ກຳນົດ ດັ່ງລຸ່ມນີ້:

1.1 ໃບຢັ້ງຢືນສຸຂະພາບສັດ ຕ້ອງປະກອບດ້ວຍ :

1.1.1 ສັດໃຫຍ່ທີ່ຈະສົ່ງອອກ ຕ້ອງໃຫ້ສອດຄ່ອງກັບເງື່ອນໄຂຂອງການກັກກັນທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

1.1.2 ຈຳນວນສັດໃຫຍ່ ທີ່ຈະສົ່ງອອກແຕ່ລະໂຕ ຕ້ອງມີລະຫັດປະຈຳຕົວ ພຽງລະຫັດດຽວ;

1.1.3 ຕ້ອງມີການຢັ້ງຢືນຜົນການກວດທາງດ້ານອາການສະແດງອອກພາຍນອກຂອງສັດ;

1.1.4 ໃຫ້ລະບຸຊື່, ປະລິມານ ແລະ ວັນເດືອນປີ ທີ່ໃຊ້ຢາຂ້າແມ່ກາຝາກ;

1.1.5 ວັນເວລາຂົນສົ່ງ, ຊື່ດ່ານນຳອອກ, ຮູບແບບ ແລະ ພາຫານະໃນການຂົນສົ່ງ, ປ້າຍທະບຽນ ຂອງພາຫະນະ ພ້ອມດ້ວຍ ຊື່ຢາຂ້າເຊື້ອ ແລະ ວັນເວລາທີ່ໃຊ້ຂ້າເຊື້ອພາຫະນະ;

1.1.6 ຊື່ ແລະ ທີ່ຢູ່ ຂອງ ຜູ້ສົ່ງອອກ ແລະ ຜູ້ນຳເຂົ້າ;

1.1.7 ວັນທີ ອອກໃບຢັ້ງຢືນສຸຂະພາບສັດ, ລາຍເຊັນ ແລະ ຊື່ ເປັນໂຕພິມ ຂອງເຈົ້າໜ້າທີ່ສັດຕະວະແພດ ກະຊວງກະສິກຳ ແລະ ປ່າໄມ້;

1.1.8 ໃບຢັ້ງຢືນສຸຂະພາບສັດ ຕ້ອງໄດ້ປະທັບກາ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ຢ່າງເປັນທາງການ.

1.2 ໃບຢັ້ງຢືນສຸຂະພາບສັດ ຕ້ອງເຮັດເປັນສະບັບຕົ້ນ 1 ສະບັບ ແລະ ສຳເນົາອີກ 2 ສະບັບ, ສະບັບຕົ້ນຕ້ອງໄດ້ຄັດຕິດໃບຢັ້ງຢືນການສັກຢາກັນພະຍາດສັດທີ່ກ່ຽວຂ້ອງ ແລະ ຕ້ອງຕິດຕາມໄປນຳການຂົນສົ່ງສັດໃຫຍ່ ທີ່ຈະສົ່ງອອກ;

1.3 ໃບຢັ້ງຢັ້ງຢືນສຸຂະພາບສັດ ຕ້ອງພິມ ທັງພາສາຈີນ ແລະ ພາສາອັງກິດ, ການຂຽນ ຫລື ພິມໃບຢັ້ງຢືນ ຕ້ອງໃຫ້ຊັດເຈນ ຈະແຈ້ງ (ນອກຈາກລາຍເຊັນຂອງເຈົ້າໜ້າທີ່ສັດຕະວະແພດ), ຫາກພົບເຫັນມີການດັດແປງ ຖືວ່ານຳໃຊ້ບໍ່ໄດ້;

1.4 ສັດໃຫຍ່ ທີ່ໄດ້ຂົນສົ່ງມາຮອດດ່ານຂາເຂົ້າຂອງຝ່າຍຈີນ ຕ້ອງມີໃບຢັ້ງຢືນສຸຂະພາບສັດທີ່ມີຜົນສັກສິດຕິດຕາມມານຳ, ຖ້າເຫັນວ່າໃບຢັ້ງຢືນສຸຂະພາບສັດ ບໍ່ຖືກຕ້ອງ ຫຼື ບໍ່ມີໃບຢັ້ງຢືນສຸຂະພາບສັດເລີຍ, ສັດໃຫຍ່ນັ້ນຈະສົ່ງສັດນັ້ນກັບຄືນ ຫລື ທຳລາຍຖິ້ມ ໂດຍກົມໃຫຍ່ພາສີ;

**ມາດຕາ 2**

ພາຍຫລັງທີ່ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຮັບການຢືນຢັນວ່າ ກົມໃຫຍ່ພາສີ ໄດ້ອອກໃບອະນຸຍາດນຳເຂົ້າ ພືດ ແລະ ສັດ ຂອງ ສປ ຈີນ (ຕໍ່ໄປນີ້ເອີ້ນວ່າ: ໃບອະນຸຍາດນຳເຂົ້າ) ໃຫ້ກັບຜູ້ນຳເຂົ້າແລ້ວ, ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງຈະສາມາດດຳເນີນການກັກກັນ ແລະ ກວດສຸຂະພາບສັດ ຕາມຂໍ້ກຳນົດ ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 3**

ກົມໃຫຍ່ພາສີ ຈະສົ່ງເຈົ້າໜ້າທີ່ກັກກັນສັດ ໄປກວດກາຕິດຕາມສະຖານທີ່ທ້ອນໂຮມສັດໃຫຍ່, ສະຖານທີ່ກັກກັນສັດໃຫຍ່ກ່ອນສົ່ງອອກ, ດ່ານສົ່ງອອກ ແລະ ຫ້ອງວິໄຈພະຍາດສັດ ເພື່ອຮ່ວມມືກັບເຈົ້າໜ້າສັດຕະວະແພດ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ໃນການດຳເນີນການກັກກັນ ແລະ ຢັ້ງຢືນສຸຂະພາບສັດໃຫຍ່ ເພື່ອສົ່ງອອກ ໄປ ສປ ຈີນ.

**ມາດຕາ 4**

**ເງື່ອນໄຂສະເພາະເຂດຄວບຄຸມພະຍາດສັດ ສຳລັບສັດໃຫຍ່ ທີ່ຈະສົ່ງອອກ ໄປ ສປ ຈີນ**

4.1 ເຂດປອດພະຍາດປາກເປື່ອຍລີ້ນເລັບ ຢູ່ ສປປ ລາວ ຕ້ອງສ້າງຂຶ້ນ ຖ້າເປັນໄປໄດ້ ອາດໃຫ້ຢູ່ໃກ້ກັບດ່ານນຳເຂົ້າຂອງ ສປ ຈີນ ທີ່ມີໄລຍະຫ່າງບໍ່ໃຫ້ຫລຸດ 3 ກິໂລແມັດ ແລະ ເຂດດັ່ງກ່າວ ຕ້ອງໃຫ້ມີສິ່ງກີດກັນທາງດ້ານພູມສາດ ຫລື ຖືກສ້າງຂຶ້ນກໍໄດ້ ແລະ ສັດທີ່ມີຄວາມສ່ຽງທັງໝົດ ອ້ອມຮອບເຂດປອດພະຍາດ ພາຍໃນລັດສະໝີ 3 ກິໂລແມັດ ຕ້ອງໄດ້ສັກຢາກັນພະຍາດປາກເປື່ອຍລີ້ນເລັບ;

4.2 ຕ້ອງໃຫ້ສອດຄ່ອງກັບຂໍ້ກຳນົດ ຂອງ ອົງການສຸຂະພາບສັດສາກົນ (OIE) ແລະ ມາດຕະຖານ ຂອງ ສປ ຈີນ ພ້ອມທັງໄດ້ຮັບການຍອມຮັບຈາກ ກົມໃຫຍ່ພາສີ;

4.3 ພາຍໃນເຂດປອດພະຍາດປາກເປື່ອຍລີ້ນເລັບ ຕ້ອງໄດ້ລ້ຽງງົວໄວ້ ເພື່ອເປັນສັດທົດລອງ ບໍ່ໃຫ້ຫລຸດ 30 ໂຕ ແລະ ສັດທົດລອງນີ້ ຕ້ອງໄດ້ຖືກເກັບຕົວຢ່າງ ແລະ ຕ້ອງມີຜົນການກວດເລືອດ ບໍ່ພົບທາດກາຍຕ້ານຂອງເຊື້ອພະຍາດປາກເປື່ອຍລີ້ນເລັບ. ໃນແຕ່ລະປີ, ງົວທົດລອງທຸກໂຕ ຕ້ອງໄດ້ມີການກວດຫາທາດກາຍຕ້ານ ຂອງເຊື້ອພະຍາດປາກເປື່ອຍລີ້ນເລັບ ແລະ ຜົນກວດ ກໍຕ້ອງໃຫ້ສອດຄ່ອງກັບເງື່ອນໄຂຂອງເຂດປອດພະຍາດສັດ ທີ່ ອົງການສຸຂະພາບສັດສາກົນ ກຳນົດ.

**ມາດຕາ 5**

**ສັດໃຫຍ່ທີ່ຈະສົ່ງອອກ ຕ້ອງໄດ້ລ້ຽງໄວ້ ຢູ່ໃນຟາມທ້ອນໂຮມສັດ ຢ່າງໜ້ອຍ 45 ວັນ ກ່ອນການສົ່ງອອກ**

**5.1 ມາດຕະຖານສຳລັບຟາມທ້ອນໂຮມສັດໃຫຍ່ :**

5.1.1 ຟາມທ້ອນໂຮມສັດໃຫຍ່ ຕ້ອງຕັ້ງຢູ່ໃນບໍລິເວນ 3 ຫາ 50 ກິໂລແມັດ ອ້ອມຮອບເຂດປອດພະຍາດປາກເປື່ອຍລີ້ນເລັບ;

5.1.2 ຕ້ອງມີຂະໜາດການຜະລິດທີ່ແນ່ນອນ ແລະ ໄດ້ຮັບການອະນຸມັດ ຈາກ ກະຊວງກະສິກຳ ແລະ ປ່າໄມ້;

5.1.3 ຕ້ອງໃຫ້ສອດຄ່ອງ ຕາມມາດຕະຖານຄວາມປອດໄພທາງຊີວະ ຂອງ ກະຊວງກະສິກຳ ແລະ ປ່າໄມ້;

5.1.4 ສັດໃຫຍ່ ເພດຜູ້ ຕ້ອງໄດ້ແຍກລ້ຽງ ຈາກ ເພດແມ່, ບໍ່ໃຫ້ຢູ່ຮ່ວມກັນ;

5.1.5 ໃນໄລຍະ 6 ເດືອນ ກ່ອນສົ່ງອອກ ຟາມດັ່ງກ່າວ ຕ້ອງບໍ່ພົບສັດທີ່ມີຜົນກວດຈາກຫ້ອງວິໄຈພະຍາດສັດ ພົບເຊື້ອພະຍາດຜິວໜັງອັກເສບຕິດແປດ (Lumpy Skin Disease), ພະຍາດປອດອັກເສບຕິດແປດ ງົວ ຄວາຍ (Contagious Bovine Pleuropneumonia), ພະຍາດງົວບ້າ (Bovine Spongiform Encephalopathy), ພະຍາດປາກເປື່ອຍລີ້ນເລັບ (Foot and Mouth Disease), ພະຍາດແທ້ງລູກຕິດຕໍ່ ງົວ ຄວາຍ (Bovine Brucellosis), ພະຍາດວັນນະໂລກ ງົວ ຄວາຍ (Bovine

ພະຍາດໄຂ້ເລືອດດຳ (Anthrax) ແລະ ພະຍາດອະຫິວາສັດກີບຂະໜາດນ້ອຍ (Pest Petis Ruminants).

**5.2 ຂໍ້ກຳນົດໃນການກັກກັນ ແລະ ກວດກາສຸຂະພາບສັດໃຫຍ່ :**

ເຈົ້າໜ້າທີ່ສັດຕະວະແພດ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງໄດ້ດຳເນີນການກັກກັນ ແລະ ກວດສຸຂະພາບສັດໃຫຍ່ ໃຫ້ສຳເລັດ ຕາມເງື່ອນໄຂ ດັ່ງລຸ່ມນີ້:

5.2.1 ສັດໃຫຍ່ແຕ່ລະໂຕ ຕ້ອງໄດ້ຕິດລະຫັດປະຈຳຕົວ ແລະ ເປັນລະຫັດທີ່ ກົມໃຫຍ່ພາສີ ຮັບຮູ້;

5.2.2 ຕ້ອງຮັບປະກັນວ່າ ສັດໃຫຍ່ເພດແມ່ ບໍ່ໄດ້ຖືພາ;

5.2.3 ສັດທຸກໂຕ ຕ້ອງໄດ້ຜ່ານການກວດສຸຂະພາບໃນແຕ່ລະມື້ ແລະ ຕ້ອງບໍ່ສະແດງອາການຂອງພະຍາດລະບາດສັດ ແລະ ພະຍາດແມ່ກາຝາກໃດໆ;

5.2.4 ສັດໃຫຍ່ ທີ່ນຳເຂົ້າມາລ້ຽງໃນຟາມທ້ອນໂຮມສັດ ຕ້ອງໄດ້ສັກຢາກັນ ພະຍາດເຕົ້າໂຮມເລືອດ ງົວ ຄວາຍ ແລະ ພະຍາດປາກເປື່ອຍລີບເລັບຄັ້ງທຳອິດ ໃຫ້ສຳເລັດໝົດທຸກໂຕ. ໂດຍອີງຕາມຂັ້ນຕອນການສັກຢາປ້ອງກັນພະຍາດສັດ ຕ້ອງໄດ້ສັກຢາກັນພະຍາດປາກເປື່ອຍລີບເລັບຊ້ຳຄືນເປັນຄັ້ງທີສອງ. ການຄັດເລືອກຢາກັນພະຍາດສັດ ແລະ ຂັ້ນຕອນການສັກຢາກັນພະຍາດສັດ ຕ້ອງປະຕິບັດຕາມວິທີການທີ່ຍອມຮັບ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ແລະ ກົມໃຫຍ່ພາສີ;

5.2.5 ໃນກໍລະນີ ກວດພົບເຫັນອາການຂອງພະຍາດສັດໃຫຍ່ ທີ່ໄດ້ລະບຸໄວ້ໃນມາດຕານີ້, ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງໄດ້ເກັບຕົວຢ່າງ ແລະ ສົ່ງເຂົ້າຫ້ອງວິໄຈພະຍາດສັດ ເພື່ອວິໄຈຊອກຫາເຊື້ອທີ່ເປັນສາເຫດຂອງພະຍາດໂດຍທັນທີ. ຖ້າມີການຢັ້ງຢືນວ່າ ສັດຕິດເຊື້ອພະຍາດ, ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງລາຍງານໃຫ້ ກົມໃຫຍ່ພາສີ ຮັບຊາບໂດຍດ່ວນ ແລະ ບໍ່ອະນຸຍາດໃຫ້ສັດໃຫຍ່ ຢູ່ ໃນຟາມດັ່ງກ່າວ ສົ່ງເຂົ້າໄປກັກກັນກ່ອນການສົ່ງອອກ. ຖ້າການກວດເຊື້ອພະຍາດເປັນຜົນລົບ ໃຫ້ທຳລາຍສັດໂຕທີ່ເປັນພະຍາດໃນຟາມທ້ອນໂຮມສັດຖິ້ມທັນທີ;

5.2.6 ຕ້ອງນຳໃຊ້ ຢາຂ້າແມ່ກາຝາກທີ່ອອກລິດເປັນວົງກວ້າງ ຖ່າຍພະຍາດແມ່ກາຝາກ ທີ່ສອງຝ່າຍຍອມຮັບ;

5.2.7 ພາຫະນະ ແລະ ອຸປະກອນ ທີ່ນຳໃຊ້ເຂົ້າໃນການຂົນສົ່ງສັດ ຈາກ ຟາມທ້ອນໂຮມສັດ ໄປຫາ ຟາມກັກກັນສັດກ່ອນການສົ່ງອອກ ຕ້ອງໄດ້ທຳຄວາມສະອາດ ແລະ ໄດ້ຂ້າເຊື້ອພະຍາດ ດ້ວຍຢາຂ້າເຊື້ອ ທີ່ໄດ້ຮັບອະນຸຍາດ ໂດຍກະຊວງກະສິກຳ ແລະ ປ່າໄມ້.

## ມາດຕາ 6

ສັດໃຫຍ່ທີ່ຢູ່ໃນຟາມທ້ອນໂຮມສັດ ທີ່ຜ່ານການກວດກາໄດ້ມາດຕະຖານ ຈະອະນຸຍາດໃຫ້ເຂົ້າໄປຟາມກັກກັນສັດກ່ອນການສົ່ງອອກ ແລະ ໃຊ້ເວລາໃນການກັກກັນ ຢ່າງໜ້ອຍ 30 ວັນ ຊຶ່ງໄລຍະເວລາຂອງການກັກກັນແມ່ນໃຫ້ເລີ່ມນັບເອົາມື້ທີ່ນຳເອົາສັດໂຕສຸດທ້າຍ ເຂົ້າໄປໃນຟາມກັກກັນ ເປັນຕົ້ນໄປ.

**6.1 ຂໍ້ກຳນົດຂອງຟາມກັກກັນສັດກ່ອນການສົ່ງອອກ :**

6.1.1 ຟາມກັກກັນສັດກ່ອນການສົ່ງອອກ ຕ້ອງຕັ້ງຢູ່ ໃນບໍລິເວນເຂດປອດພະຍາດປາກເປື່ອຍລີບເລັບ ທີ່ ກົມໃຫຍ່ພາສີ ຮັບຮອງ;

6.1.2 ຟາມກັກກັນສັດກ່ອນການສົ່ງອອກ ຕ້ອງໃຫ້ສອດຄ່ອງກັບ "ຂໍ້ກຳນົດຂອງສະຖານທີ່ກັກກັນ ເພື່ອນຳເຂົ້າສຳລັບສັດໃຫຍ່, ແກະ ແລະ ແບ້" (ມາດຕະຖານການກັກກັນ ແລະ ກວດກາສຸຂະພາບ ຂອງ ສປ ຈີນ ເລກທີ SN/T 4233-2015) ແລະ ຕ້ອງໄດ້ຜ່ານການຮັບຮອງ ຈາກ ກະຊວງກະສິກຳ ແລະ ປ່າໄມ້ ແລະ ກົມໃຫຍ່ພາສີ;

6.1.3 ຟາມກັກກັນສັດກ່ອນການສົ່ງອອກ ຕ້ອງຢູ່ພາຍໃຕ້ການຊີ້ນຳ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ຢ່າງມີປະສິດທິຜົນ.

**6.2 ຂໍ້ກຳນົດໃນການກັກກັນ ແລະ ກວດສຸຂະພາບສັດ :**

6.2.1 ເຈົ້າໜ້າທີ່ສັດຕະວະແພດ ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງໄດ້ເອົາໃຈໃສ່ກວດສຸຂະພາບສັດດ້ານອາການ , ກວດເບີຫູສັດ ແລະ ກວດການບັນທຶກການສັກຢາກັນພະຍາດສັດແຕ່ລະໂຕ ກ່ອນການຂົນສົ່ງສັດ ມາເຖິງຟາມກັກກັນສັດກ່ອນສົ່ງອອກ. ໃນກໍລະນີພົບເຫັນ ສັດສະແດງອາການໃດໜຶ່ງ ຂອງພະຍາດລະບາດສັດ ຫລື ພະຍາດແມ່ກາຝາກ ຕ້ອງຄັດອອກຈາກຝູງໂດຍທັນທີ;

6.2.2 ສັດທີ່ນຳເຂົ້າໄປໃນຟາມກັກກັນສັດກ່ອນການສົ່ງອອກ ຕ້ອງແຍກລ້ຽງຕ່າງຫາກ ເປັນແຕ່ລະຊຸດ;

6.2.3 ຫຍ້າທີ່ໃຫ້ສັດກິນ ແລະໃຊ້ຮອງພື້ນໃນໄລຍະເວລາກັກກັນ ຕ້ອງນຳມາຈາກບ່ອນທີ່ໄດ້ມີການຮັບຮອງ ຈາກ ກົມໃຫຍ່ພາສີ ແລະ ບໍ່ໄດ້ນຳມາຈາກເຂດທີ່ມີກຳລັງມີການຄວບຄຸມພະຍາດ ງົວ ຄວາຍ ທີ່ຈຳເປັນຕ້ອງແຈ້ງ;

6.2.4 ສັດໃຫຍ່ທີ່ຈະສົ່ງອອກ ຕ້ອງໄດ້ກວດຫາທາດການຕ້ານ ພາຍຫຼັງການສັກຢາກັນພະຍາດສັດ ໂດຍອີງຕາມມາດຕະຖານ ທີ່ກົມໃຫຍ່ພາສີ ໃຫ້ການຮັບຮອງ.

## ມາດຕາ 7

## ຂໍ້ກຳນົດກ່ຽວກັບຄວາມປອດໄພຂອງດ້ານອາຫານ

7.1 ສັດໃຫຍ່ທີ່ຈະສົ່ງອອກໄປ ສປ ຈີນ ຕ້ອງບໍ່ນຳໃຊ້ຢາທີ່ບໍ່ໄດ້ຮັບອະນຸຍາດ ໂດຍກະຊວງກະສິກຳ ແລະ ປ່າໄມ້. ສານຕົກຄ້າງຂອງຢາ ຕ້ອງຢູ່ໃນລະດັບທີ່ບໍ່ເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ ແລະ ຕ້ອງໃຫ້ໄດ້ມາດຕະຖານທີ່ກ່ຽວຂ້ອງ ຂອງ ສປ ຈີນ;

7.2 ສັດໃຫຍ່ທີ່ຈະສົ່ງອອກ ໄປ ສປ ຈີນ ຕ້ອງບໍ່ນຳໃຊ້ ຮອກໂມນ ກະຕຸ້ນການຈະເລີນເຕີບໂຕ (HGP);

7.3 ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງສ້າງແຜນຕິດຕາມ ຄວາມສ່ຽງ ຄວາມປອດໄພດ້ານອາຫານ ສຳລັບສັດໃຫຍ່ທີ່ຈະສົ່ງອອກ ໄປ ສປ ຈີນ ຢູ່ໃນຟາມກັກກັນກ່ອນການສົ່ງອອກ ແລະ ຈັດຕັ້ງປະຕິບັດ ໃຫ້ມີປະສິດທິພາບ.

## ມາດຕາ 8

## ມາດຕະການກ່ຽວກັບການຂົນສົ່ງສັດໃຫຍ່ ຈາກ ຟາມກັກກັນສັດກ່ອນການສົ່ງອອກ ໄປ ສປ ຈີນ

8.1 ສັດໃຫຍ່ທີ່ຈະສົ່ງອອກ ຕ້ອງໄດ້ຮັບການກວດກາທາງດ້ານອາການ ພາຍໃນ 24 ຊົ່ວໂມງ ກ່ອນຈະນຳສັດຂຶ້ນພາຫະນະຂົນສົ່ງ, ຖ້າວ່າສັດ ບໍ່ມີອາການສະແດງອອກ ຂອງ ພະຍາດລະບາດສັດ ແລະ ພະຍາດແມ່ກາຝາກ ຖືວ່າ ເໝາະສົມສຳລັບການຂົນສົ່ງ;

8.2 ໃນຂອບເຂດບໍລິເວນອ້ອມຂ້າງເສັ້ນທາງຂົນສົ່ງສັດ ຈາກສະຖານທີ່ກັກກັນສັດ ໄປຫາ ດ່ານສົ່ງອອກ ດ້ານລະ 3 ກິໂລແມັດ ພາຍໃນ 6 ເດືອນຜ່ານມາ ຕ້ອງບໍ່ມີການລາຍງານການລະບາດພະຍາດຜິວໜັງອັກເສບຕິດແປດ ພະຍາດປອດອັກເສບຕິດແປດ ງົວ ຄວາຍ, ງົວບ້າ ແລະ ພະຍາດອະຫິວາສັດຄ້ຽວເອື້ອງນ້ອຍ.

8.3 ພາຫະນະ ແລະ ອຸປະກອນ ທີ່ໃຊ້ໃນການຂົນສົ່ງສັດ ຕ້ອງໄດ້ຜ່ານການທຳຄວາມສະອາດ ແລະ ຂ້າເຊື້ອ ດ້ວຍຢາຂ້າເຊື້ອ ທີ່ໄດ້ຮັບອະນຸຍາດໂດຍ ກະຊວງກະສິກຳ ແລະ ປ່າໄມ້;

8.4 ໃນລະຫວ່າງ ການບັນຈຸ, ການຂົນສົ່ງ ແລະ ການກັກກັນສັດໃຫຍ່ທີ່ຈະສົ່ງອອກ ຕ້ອງບໍ່ໃຫ້ປົນເປກັບກັບສັດຂອງຜູ້ສົ່ງອອກຄົນອື່ນ ຫລື ສົ່ງສັດໄປໃຫ້ຜູ້ນຳເຂົ້າທີ່ບໍ່ແມ່ນຄົນດຽວກັນກັບຜູ້ທີ່ລະບຸໄວ້ໃນໃບອະນຸຍາດ;

8.5 ຫຍ້າ ແລະ ວັດຖຸຮອງພື້ນ ທີ່ນຳໃຊ້ໃນລະຫວ່າງການຂົນສົ່ງ ຕ້ອງນຳມາຈາກບ່ອນທີ່ມີການຮັບຮອງ ຈາກ ກົມໃຫຍ່ພາສີ ແລະ ບໍ່ໄດ້ເອົາມາຈາກເຂດທີ່ກຳລັງມີການຄວບຄຸມພະຍາດ ງົວ ຄວາຍ ທີ່ຈຳເປັນຕ້ອງແຈ້ງ;

8.6 ສັດໃຫຍ່ທີ່ຈະສົ່ງອອກ ຕ້ອງໄດ້ຂົນສົ່ງໄປຕາມເສັ້ນທາງຫາດ່ານນຳເຂົ້າ ຂອງ ສປ ຈີນ ທີ່ໄດ້ກຳນົດໄວ້ໃນ ໃບອະນຸຍາດນຳເຂົ້າ ທີ່ອອກໃຫ້ ໂດຍ ກົມໃຫຍ່ພາສີ.

**ມາດຕາ 9**

ການຄຸ້ມຄອງຟາມທ້ອນໂຮມສັດໃຫຍ່, ຟາມກັກກັນສັດກ່ອນການສົ່ງອອກ ແລະ ໃນລະຫວ່າງການຂົນສົ່ງ ຕ້ອງປະຕິບັດຕາມຄູ່ມືແນະນຳດ້ານລະຫວັດຄືການສັດ ຂອງ ອົງການສຸຂະພາບສັດສາກົນ ກຳນົດ.

**ມາດຕາ 10**

ການປັບປຸງຂໍ້ຕົກລົງສະບັບນີ້ ສາມາດຮັບຮອງເປັນລາຍລັກອັກສອນ ຈາກ ເຈົ້າໜ້າທີ່ຮັບຜິດຊອບຂອງກົມທີ່ມີອຳນາດ ທີ່ໄດ້ຮັບການມອບໝາຍຈາກ ກະຊວງກະສິກຳ ແລະ ປ່າໄມ້ ແລະ ກົມໃຫຍ່ພາສີ.

**ມາດຕາ 11**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຖ້າວ່າ ກະຊວງກະສິກຳ ແລະ ປ່າໄມ້ ຫລື ກົມໃຫຍ່ພາສີ ສະເໜີການຍົກເລີກ ຂໍ້ຕົກລົງສະບັບນີ້ ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຮັບຊາບ ຢ່າງເປັນລາຍລັກອັກສອນ ແລະ ຫລັງຈາກນັ້ນ 6 ເດືອນ ຈຶ່ງຖືວ່າເປັນການສິ້ນສຸດ ຂໍ້ຕົກລົງ ສະບັບນີ້.

**ມາດຕາ 12**

ຂໍ້ຕົກລົງສະບັບນີ້ ລົງນາມ ໃນວັນທີ 30 ເມສາ 2019 ທີ່ ນະຄອນຫຼວງປັກກິ່ງ, ເປັນສອງສະບັບຕົ້ນ, ເປັນພາສາຈີນ, ພາສາລາວ ແລະ ພາສາອັງກິດ, ທັງສາມພາສາລ້ວນແຕ່ມີຜົນສັກສິດເທົ່າກັນ. ຖ້າຫາກມີຂໍ້ຜິດພາດ ກ່ຽວກັບການຕີຄວາມໝາຍ ສະບັບພາສາອັງກິດຈະເປັນບ່ອນອີງ.

| | |
|---|---|
| **ຕາງໜ້າ** | **ຕາງໜ້າ** |
| **ກະຊວງກະສິກຳ ແລະ ປ່າໄມ້ ແຫ່ງ** | **ກົມໃຫຍ່ພາສີ ແຫ່ງ** |
| **ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ** | **ສາທາລະນະລັດ ປະຊາຊົນ ຈີນ** |

# Protocol between Ministry of Agriculture and Forestry of Lao People's Democratic Republic and General Administration of Customs of the People's Republic of China on Quarantine and Health Requirements for Slaughter Bovine to be exported from Lao PDR to China

The Ministry of Agriculture and Forestry of Lao People's Democratic Republic (hereinafter abbreviate as "MAF") and the General Administration of Customs of the People's Republic of China (hereinafter abbreviate as "GACC") reach the following agreement, through friendly consultation, on quarantine and health requirements for slaughter bovine to be exported from the Lao People's Democratic Republic to the People's Republic of China.

Definition:

Slaughter bovine refer to cattle and buffalo that younger than 4 years old and will be slaughtered within 7 days after entering into China for human consumption.

## Article 1

MAF is responsible for inspection and quarantine of slaughter bovine to be exported to China and issuance of health certificate. MAF shall provide GACC in advance a model health certificate, which shall become effective after the confirmation of GACC. The health certificate shall meet following requirements:

1. The health certificate shall include:

1.1 A statement that slaughter bovine to be exported shall meet all requirements of this protocol;

1.2 The quantity of slaughter bovine to be exported and the unique identification number of each animal;

1.3 The results of clinical examination;

1.4 The name, dosage, usage date of parasiticide;

1.5 Date of embarkation, port of departure, means of transportation and plate number of vehicle, the disinfectant name used for vehicle and its usage date;

1.6 The name and address of exporter and importer;

1.7 The date of issuance of the certificate, signature and printed name of veterinary officer of MAF;

1.8 The official stamp of MAF.

2. One original and two copies of the health certificate are required. The original one shall be attached with relevant vaccination certificate and shall accompany the shipment.
3. The health certificate model shall be printed in both Chinese and English. Any hand-writing (except the signature of veterinary officer) or alteration in health certificate is invalid.

4. The slaughter bovine shall be accompanied with a valid health certificate when arriving at entry port of China. If there is no valid health certificate, or without any health certificate, the bovine shall be returned or destroyed by GACC.

## Article 2

MAF shall initiate inspection and quarantine procedure on slaughter bovine to be exported according to this Protocol and the requirements set forth in the Quarantine Permit of Entry Animal and Plant of the People's Republic of China (hereinafter abbreviate as "Import Permit") only after confirming that Import Permit has been granted to the importer by GACC.

## Article 3

GACC shall send animal quarantine officer(s) to related collection farm, Pre-export Quarantine Farm, port of departure and/or laboratories to cooperate with MAF veterinary officers to conduct quarantine and certification on slaughter bovine for export.

## Article 4

The slaughter bovine for export shall comply with the requirements of regionalization.

4.1 The FMD Free Zone in Lao PDR should be established in the distance no less than 3 Km and as close as possible to the Chinese entry port and should have geographical and physical barrier. All susceptible animals within 3 km around free zone should be vaccinated.

4.2 In accordance with the both OIE and Chinese standards and approved by GACC.

4.3 At least 30 sentinel bovine should be kept in the FMD Free Zone. The sentinel bovine shall be serologically negative for FMD when entering the FMD Free Zone. Each year, serologic surveillance on the sentinel bovine should be done and the results should comply with OIE Disease Free Zone standards.

## Article 5

The bovine to be exported should be raised on a collection farm for at least 45 days.

5.1 The requirements for collection farm:

5.1.1 The collection farm should be located in the area that within 3-50 km range from edge of FMD free zone;

5.1.2 It has been approved by MAF and has a certain production capability.

5.1.3 In accordance with the MAF biological safety standards;

5.1.4 The male bovine should be kept separately from the females;

5.1.5 During the last 6 months, there has been no laboratory confirmed etiologic positive case of the following diseases: Lumpy skin disease, Contagious bovine pleuropneumonia, Bovine spongiform encephalopathy, Foot and mouth disease,

Brucellosis, Bovine Tuberculosis, Anthrax, Peste des petits ruminants.

5.2 The inspection and quarantine requirements:

The following inspection and quarantine must be conducted by the official veterinarian of MAF:

5.2.1 Identifying each bovine with ear tag approved by GACC;

5.2.2 Confirming the female bovine is free from any sign of pregnancy;

5.2.3 Confirming the bovine is free from any signs of infectious/contagious and parasite disease by every day clinic examination;

5.2.4 Vaccination against FMD and Hemorrhagic septicemia of bovine should be conducted when the animal arrive on collection farm. The second vaccination against FMD should be performed according to the recommended immune procedure. All vaccine and the immune procedure should be approved by both MAF and GACC;

5.2.5 In case of any bovine with the clinical signs of disease listed in this article is found, MAF shall immediately collect sample and send to the laboratory for etiologic test. If any positive animal be confirmed, MAF shall notify GACC and all of bovine on the farm cannot be moved into the Pre-export Quarantine Farm. If the etiologic test result is negative, the sick animal shall be removed from the collection farm immediately;

5.2.6 A treatment with wide spectrum antiparasite drugs which approved by both sides shall be applied;

5.2.7 The vehicles and appliance used for transportation from collection farm to Pre-export Quarantine Farm should be cleaned and disinfected with disinfectant approved by MAF.

## Article 6

The qualified animal from collection farm can be moved to the Pre-export Quarantine Farm for isolation at least 30 days. The date of isolation starting is when the last animal entering into the Pre-export quarantine farm.

6.1 The requirements for the Pre-export Quarantine Farm.

6.1.1 The Pre-export Quarantine Farm shall be located in the FMD Free Zone approved by GACC;

6.1.2 The Pre-export Quarantine Farm shall comply with the "Requirements of the Isolation Facilities for Imported Bovine and Sheep/Goats" (Chinese inspection and quarantine standard No. SN/T 4233-2015) and approved by MAF and GACC;

6.1.3 The Pre-export Quarantine Farm shall be effectively supervised by MAF.

6.2 The inspection and quarantine requirements:

6.2.1 The official veterinarian from MAF should carry out clinic health check and check the ear tag number and vaccination record of each bovine when the animal arriving

at the Pre-export Quarantine farm. MAF shall carry out the clinic examination every day. In case of any signs of infectious/contagious or parasitic diseases, the bovine must be removed immediately;

6.2.2 Each batch of animal on the Pre-export Quarantine Farm shall be kept separately from other batches;

6.2.3 The forage and bedding materials used in quarantine and transport should come from the areas where approved by GACC and shall not be originated from the properties undergoing quarantine for a notifiable disease of bovine;

6.2.4 The slaughter bovine shall be monitored for the immune antibody titer according to the standard approved by GACC

## Article 7

The food safety requirements

7.1 The slaughter bovine for export shall not be treated with the medicines that not approved by MAF. The residue of the medicine should be at the levels that not harmful to human health and in accordance with Chinese legislation.

7.2 The slaughter bovine to be exported shall not be treated with any Hormone Growth Promotant (HGP).

7.3 MAF should establish food safety monitoring plan for exporting bovine in Pre-export Quarantine Farm and implement effectively.

## Article 8

Requirements for transportation from Pre-export Quarantine Farm export to China:

8.1 The slaughter bovine for export shall be examined within 24 hours before loading. The animal should show no any signs of infectious/contagious or parasitic diseases and suitable for transportation.

8.2 Within the regions of 3 Km radius along transportation route from Pre-export Quarantine farm to the port, there should be no reports of occurrence in the past 6 months of the following diseases: Lumpy skin disease, Contagious bovine pleuropneumonia, Bovine spongiform encephalopathy, Foot and mouth disease, Peste des petits ruminants.

8.3 The vehicles and transport appliance shall be cleaned and disinfected with disinfectant approved by MAF.

8.4 The slaughter bovine to be exported shall not be mixed during loading, transportation and quarantine with any other animals of different consigners and consignees.

8.5 The forage and bedding materials used during transportation should come from the areas approved by GACC and not originated from properties undergoing quarantine for a notifiable disease of bovine.

8.6 The slaughter bovine to be exported shall be transported to Chinese port of entry along

the route designated in the Import Permit issued by GACC.

## Article 9

The management in collection farm, pre-export quarantine farm and during the transportation should be in accordance with OIE animal welfare guidelines.

## Article 10

Amendment of this Protocol can be confirmed in manner of written-correspondence by responsible officer of competent department authorized by GACC and MAF.

## Article 11

This Protocol shall take effect as of the Date of signature. Either GACC or MAF may propose repeal of this Protocol and this Protocol shall be terminated 6 months later when one side notifying the other in written.

## Article 12

This Protocol is signed on 30th April 2019 in Beijing done in duplicate in Chinese, Lao and English. All different language versions are equally valid. In case of any ambiguity may exist among these versions, the English version should be prevail.

**On behalf of**
**Ministry of Agriculture and Forestry of Lao People's Democratic Republic**

**On behalf of**
**General Administration of Customs of the People's Republic of China**

# 老挝人民民主共和国农林部和中华人民共和国海关总署关于中国从老挝输入屠宰用肉牛的检疫和卫生要求议定书

老挝人民民主共和国农林部（以下简称“农林部”）和中华人民共和国海关总署（以下简称“海关总署”）经过友好协商，决定就中国从老挝输入屠宰用肉牛的检疫和卫生要求缔结如下协议。

屠宰用肉牛：指年龄小于4岁且在入境中国后7天内完成屠宰供人类食用的牛。

## 第一条

老方负责对输出屠宰用肉牛的检验检疫，并出具检疫证书。农林部须事先向海关总署提交检疫证书样本，并经海关总署确认后生效。检疫证书应符合下列条件：

（一）检疫证书内容应包括：

1、陈述出口牛符合本议定书规定的检疫要求；

2、输出牛的数量及每头牛唯一的身份标识号；

3、临床检查结果；

4、驱除寄生虫用药的名称、剂量及使用时间；

5、启运时间、口岸、运输方式和运输工具、牌照号及消毒用药的名称和使用时间；

6、出口商和进口商的名称和地址；

7、证书的签发时间、农林部兽医官姓名的印刷体和签名；

8、农林部的官方印章。

（二）检疫证书须一正本和两副本，正本必须随货同行，并附有相关的免疫证明。

（三）检疫证书须用中文和英文打印，手写（除兽医官签名外）、涂改无效。

（四）屠宰用肉牛运抵中国入境口岸时必须随附有效检疫证书。如无有效检疫证书或没有检疫证书，海关总署将对进口屠宰用肉牛作退回或销毁处理

## 第二条

农林部在确认海关总署已为进口商签发有效《进境动植物检疫许可证》后，方可按照本议定书的规定和《进境动植物检疫许可证》的要求实施检验检疫。

## 第三条

海关总署将派出官方兽医到输出屠宰用肉牛的集中饲养场所、隔离场、出境口岸和实验室配合农林部兽医人员对出口屠宰用肉牛开展检验检疫工作。

## 第四条

出口屠宰用肉牛应符合区域化管理要求。

1、老挝境内的口蹄疫非疫区应尽可能接近中国入境口岸，且距中国入境口岸大于3公里，具备天然及人工屏障，非疫区周边3公里范围内的易感动物应该实施免疫；

2、应符合 OIE 以及海关总署关于非疫区管理的相关要求，并获得海关总署认可；

3、非疫区内应设置不少于30头的哨兵牛.哨兵牛在进入非疫区时口蹄疫血清学抗体检测为阴性。每年对哨兵牛进行口蹄疫血清学监测，检测结果应符合 OIE 无疫区要求。

## 第五条

拟出口的屠宰用肉牛应在在集中饲养场饲养至少45天。

（一）集中饲养场要求

1、位于海关总署认可的口蹄疫非疫区周边3-50公里的环状范围内；

2、经农林部批准设立，有一定生产规模；

3、符合农林部的生物安全标准；

4、公母牛分栏饲养；

5、过去6个月内没有牛结节性皮肤病、牛传染性胸膜肺炎、牛海绵状脑病、口蹄疫、布鲁氏菌病、牛结核病、炭疽和小反刍兽疫的实验室病原学确诊病例。

（二）检验检疫要求

农林部官方兽医完成以下检验检疫工作：

1、逐头加施海关总署认可的身份标识。

2、确认母牛无怀孕迹象。

3、每天进行巡查，动物无任何传染病、寄生虫病的临床症状。

4、进入集中饲养场的屠宰用肉牛须在入场时逐头完成多杀性巴氏杆菌疫苗接种和口蹄疫初次免疫，并按照免疫程序进行口蹄疫二次免疫。所选用的疫苗及接种程序须经中老双方认可。

5、如集中饲养场所的牛被发现本条所述疫病的临床症状，应及时采样送实验室进行病原学检测，如病原学检测阳性，农林部应立即告知海关总署，该集中饲养场所的所有动物不得调入出口前隔离检疫场；如病原学检测阴性，则立即剔除该患病动物。

6、使用中老双方认可的广谱抗菌药进行驱虫。

7、运输牛从集中饲养场到出口前隔离检疫场的车辆及工具应进行彻底清洗，并用农林部批准的消毒用药进行消毒。

第六条

集中饲养场所检疫合格的牛准许调入出口前隔离检疫场，隔离期至少30天，以该批动物中最后一头动物入场开始计算隔离检疫期。

（一）隔离检疫场要求

1、位于经海关总署认可的口蹄疫非疫区范围内。

2、隔离场按照中国《进境牛羊指定隔离场建设要求》(SN/T 4233-2015）相关要求进行建设，并经中老双方认可。

3、隔离检疫场处于农林部的有效监管之下。

（二）检验检疫要求

1、动物进入隔离检疫场时应由农林部官方兽医逐头进行临床检查、核对身份标识，并检查免疫记录，隔离检疫期间每天进行巡查。动物出现任何传染病、寄生虫病的临床症状时应及时剔除。

2、进入隔离场的动物，按照不同批次分区饲养。

3、隔离检疫期间所用的草料、垫草应来自海关总署批准的地区，并且不因与牛有关需通报疫病而禁止销售。

4、出口屠宰用肉牛应按照海关总署认可的标准进行免疫抗体滴度监测。

第七条

有关食品安全方面的要求：

（一）不得对出口屠宰用肉牛使用任何未经农林部批准的药物，符合中国相关标准，药残水平对人体无害。

（二）不得对出口屠宰用肉牛使用促生长激素。

（三）农林部应建立出口屠宰用肉牛安全风险监控计划并有效实施。

第八条

有关运输的要求：

（一）出口装运前24小时内，出口屠宰用肉牛须逐头接受临床检查，无任何传染病和寄生虫病的临床症状，适合运输；

（二）自隔离检疫场至出境口岸运输路线两侧3Km的区域范围内过去6个月无报告发生牛结节性皮肤病、牛传染性胸膜肺炎、牛海绵状脑病、口蹄疫和小反刍兽疫；

（三）运输牛的车辆及工具应进行彻底清洗，并用农林部批准的消毒用药进行消毒；

（四）输出的屠宰用肉牛在运输期间，不得与不同收、发货人的动物混装；

（五）运输途中所用的草料、垫草应来自海关总署批准的地区，并且不因与牛有关需通报疫病而禁止销售；

（六）运输须按照海关总署《进境动植物检疫许可证》中指定的路线，从指定的口岸进入中国国境。

第九条

集中饲养场、隔离检疫场和运输过程的管理应遵循OIE关于动物福利的相关指南。

第十条

对本议定书的修改，可在双方专家协商并达成一致意见的基础上，由

双方授权各自具体的业务主管部门的负责人以书面信函确认。

第十一条

本议定书自签订之日起生效。如果签约双方中的一方提出终止本议定书，则自书面通知另一方之日起六个月后终止。

第十二条

本议定书于2019年4月30日年在北京签订，一式两份，每份都用中文、英文和老挝文写成，三种文本同等作准。如有歧义，以英文本作准。

老挝人民民主共和国农林部
代 表

中华人民共和国海关总署
代 表